# ກອງປະຊຸມ ຄະນະກຳມະການນະໂຍບາຍເງິນຕາ ຂອງສະພາບໍລິຫານ ທະນາຄານແຫ່ງ ສປປ ລາວ




ໃນວັນທີ 22 ສິງຫາ 2024, ທີ່ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມ ຄະນະກຳມະການນະໂຍບາຍເງິນຕາຂອງສະພາບໍລິຫານ ທຫລ ຂຶ້ນ ໂດຍການເປັນປະທານຂອງ ທ່ານ ນາງ ວັດທະນາ ດາລາລອຍ, ຮັກສາການຜູ້ວ່າການ ທຫລ, ປະທານຄະນະກຳມະການນະໂຍບາຍເງິນຕາ, ມີຮອງປະທານ, ສະມາຊິກຂອງຄະນະກຳມະການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ.

ຈຸດປະສົງຂອງການຈັດກອງປະຊຸມ ໃນຄັ້ງນີ້, ເພື່ອປະເມີນສະພາບເສດຖະກິດ-ການເງິນ ແລະ ການຈັດຕັ້ງປະຕິບັດນະໂຍບາຍເງິນຕາ ໃນໄລຍະ 8 ເດືອນຕົ້ນປີ 2024 ໂດຍສະເພາະການຜັນຂະຫຍາຍທິດຊີ້ນຳຂອງກົມການເມືອງສູນກາງພັກ, ລັດຖະບານ, ມະຕິກອງປະຊຸມຂອງ ຄະນະກຳມະການນະໂຍບາຍເງິນຕາ ຄັ້ງຜ່ານມາ ແລະ ກຳນົດທິດທາງການຈັດຕັ້ງປະຕິບັດນະໂຍບາຍເງິນຕາໃນໄລຍະ 4 ເດືອນທ້າຍປີ 2024 ພ້ອມນີ້, ທຫລ ຍັງຈະສືບຕໍ່ດຳເນີນນະໂຍບາຍອັດຕາແລກປ່ຽນ ຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ໂດຍກຳນົດອັດຕາແລກປ່ຽນອ້າງອີງໃຫ້

ທະນາຄານທຸລະກິດ ໂດຍປະຕິບັດ ອັດຕາຊື້-ຂາຍໃນຂອບລະດັບ ±7.5% ແລະ ໄດ້ຂະຫຍາຍການກຳນົດໃຫ້ສ່ວນຕ່າງ ລະຫວ່າງອັດຕາຊື້-ຂາຍ ຂອງບາງສະກຸນເງິນ ຈາກບໍ່ເກີນ 2% ມາເປັນ ບໍ່ເກີນ 5%, ພ້ອມທັງໄດ້ດັດສົມເງິນຕາຕ່າງປະເທດໃຫ້ສິນຄ້າບູລິມະສິດ ເປັນຕົ້ນ ນ້ຳມັນເຊື້ອໄຟ ແລະ ສິນຄ້າຈຳເປັນໃນການດຳລົງຊີວິດ ພ້ອມນີ້, ກອງປະຊຸມຍັງໄດ້ຕີລາຄາສະພາບເສດຖະກິດ-ການເງິນ ໃນໄລຍະ 4 ເດືອນຕໍ່ໜ້າ ເຫັນວ່າຍັງຈະສືບຕໍ່ປະເຊີນໜ້າກັບສິ່ງທ້າທາຍຫຼາຍດ້ານ ທັງສະພາບເສດຖະກິດຂອງສາກົນ ແລະ ພາຍໃນປະເທດ ຄື: ລາຄານ້ຳມັນເຊື້ອໄຟ ແລະ ລາຄາຄຳ ມີທ່າອ່ຽງເພີ່ມຂຶ້ນ, ແຕ່ອັດຕາເງິນເຟີ້ຂອງຫຼາຍປະເທດຄາດວ່າຈະຫຍັບໃກ້ເຂົ້າລະດັບເປົ້າໝາຍທີ່ຄາດໄວ້ ສະນັ້ນ, ທຫລ ຈຶ່ງມີຄວາມຈຳ ເປັນຈະຕ້ອງສືບຕໍ່ດຳເນີນນະໂຍບາຍເງິນຕາໃນທິດທາງທີ່ຮັດກຸມຂຶ້ນຕື່ມ ໂດຍ ຄະນະກຳມະການນະໂຍບາຍເງິນຕາ ມີມະຕິຊີ້ນຳຄືດັ່ງນີ້: ① ປັບຂຶ້ນອັດຕາດອກເບ້ຍພື້ນຖານຂອງ ທຫລ ສະກຸນເງິນກີບ ຈາກ 10% ຕໍ່ປີ ມາເປັນ 10.5% ຕໍ່ປີ; ② ປັບຂຶ້ນອັດຕາເງິນແຮຝາກບັງຄັບ ສະກຸນເງິນຕາຕ່າງປະເທດ ຈາກ 10% ມາເປັນ 11%; ③ ສືບຕໍ່ດຳເນີນນະໂຍບາຍອັດຕາແລກປ່ຽນ ຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ແລະ ເລັ່ງເປີດຕະຫຼາດແລກປ່ຽນເງິນຕາຕ່າງປະເທດທີ່ລວມສູນ (FX platform); ④ ສືບຕໍ່ຈັດຕັ້ງປະຕິບັດມາດຕະການຄຸ້ມຄອງເງິນຕາຕ່າງປະເທດ ແລະ ພັດທະນາລະບົບຊຳລະສະສາງ ໃຫ້ເຊື່ອມຈອດກັນ ລະຫວ່າງທະນາຄານພາຍໃນເອງ ແລະ ໃຫ້ສາມາດເຊື່ອມຈອດກັບສາກົນ ເພື່ອຊຸກຍູ້ການສົ່ງເສີມການນຳໃຊ້ເງິນກີບ.





ກອງປະຊຸມດັ່ງກ່າວ ແມ່ນໄດ້ດຳເນີນເປັນເວລາເຄິ່ງວັນ ດ້ວຍບັນຍາກາດອັນຟົດຟື້ນ ຜູ້ເຂົ້າຮ່ວມກໍ່ໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດເຫັນ ຢ່າງກົງໄປກົງມາ ເຮັດໃຫ້ກອງປະຊຸມ ສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້.

ຂ່າວ-ພາບ: ຫ້ອງການ ທະນາຄານແຫ່ງ ສປປ ລາວ

*ຢູ່ເມືອງລາວ ໃຊ້ເງິນກີບລາວ*